ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

---

ກຳແພງນະຄອນວຽງຈັນ — ເລກທີ 1107 ຄຂປກ ກພ

ພະແນກ ຄ.ຂ.ປ.ກ — 22-9-95

VCP6-PWTD-10

# ໃບແຈ້ງການ

ເຖິງ ບັນດາຜູ້ເຮັດທຸລະກິດ ອູ່ ( ຮ້ານ ) ສ້ອມແປງ ພາຫະນະລົດໂຮງກຶງ, ໂຮງສຸ່ມ ທຸກປະເພດ ໃນທົ່ວກຳແພງນະຄອນວຽງຈັນ

ເລື່ອງ ໃຫ້ທຳການປັບປຸງ ແລະ ຈັດລົ້ນ ສະຖານທີ່ ຂອງອູ່ ( ຮ້ານ ) ສ້ອມແປງລົດ ທຸກປະເພດ, ໂຮງກຶງ, ໂຮງສຸ່ມ ຕ່າງໆ

ອີງຕາມມະຕິ ເລກທີ 77/ກພ ວຈ ລົງວັນທີ 4/2/92

ອີງຕາມໃບແຈ້ງການ ຂອງຫ້ອງວ່າການ ກຳແພງນະຄອນວຽງຈັນ ສະບັບເລກທີ 1596/ຫວກ ກພ ລົງວັນທີ 28/10/94 ກ່ຽວກັບການກວດກາ ຄືນ ບັນດາອູ່ສ້ອມແປງລົດ ທຸກປະເພດ, ໂຮງກຶງ, ໂຮງສຸ່ມ ໃນທົ່ວກຳແພງນະຄອນວຽງຈັນ

ອີງຕາມໃບແຈ້ງການເລກທີ 1351/ຄຂປກ ກພ ລົງວັນທີ 30/11/94 ກ່ຽວກັບການປັບປຸງຄືນ ບັນດາຮ້ານສ້ອມແປງລົດ, ໂຮງກຶງ, ໂຮງສຸ່ມ

ໃນໄລຍະຜ່ານມາ ສັງເກດເຫັນວ່າ ກິດຈະການອູ່ສ້ອມແປງລົດ ທຸກປະເພດ ແລະ ບັນດາໂຮງກຶງ, ໂຮງສຸ່ມຕ່າງໆ ແມ່ນມີຈຳນວນເພີ່ມຂຶ້ນ ບັນດາອູ່ສ້ອມແປງລົດຕ່າງໆ ຈຳນວນໜຶ່ງ ກໍ່ສະເໜີ ຂໍອະນຸຍາດ ດຳເນີນທຸລະກິດ ຢ່າງຖືກຕ້ອງ ແຕ່ກໍ່ຍັງມີຈຳນວນໜຶ່ງ ຍັງຖືເປີດ ບໍ່ທັນໄດ້ມາສະເໜີ ຂໍອະນຸຍາດ ດຳເນີນທຸລະກິດ ແລະ ຜ່ານການກວດກາກ່ຽວກັບ ສະຖານທີ່ຢ່າງຖືກຕ້ອງ ຈາກພະແນກ ຄຂປກ ປະຈຳກຳແພງນະຄອນວຽງຈັນ ຈາກບັນຫາດັ່ງກ່າວນີ້ ມັນໄດ້ສ້າງຄວາມບໍ່ເປັນລະບຽບ ຂາດການຄຸ້ມຄອງ ແລະ ກວດກາຈາກພາກສ່ວນກ່ຽວຂ້ອງ, ສິ່ງເຫັນສະທ້ອນເຖິງການເກັບກຳ ອາກອນລາຍຮັບ, ການເສຍພັນທະໃຫ້ລັດ ບໍ່ໄດ້ຄົບເຕັມທີ່ຄວນ

ດັ່ງນັ້ນ, ພະແນກຄຂປກ ກຳແພງນະຄອນວຽງຈັນ ຈຶ່ງອອກໃບແຈ້ງການເໜັ້ນໜັກ ເພີ່ມເຕີມ ຕໍ່ຈາກສະບັບເລກທີ 1351/ຄຂປກ.ກພ ລົງວັນທີ 30/11/94 ເຊິ່ງມີເນື້ອໃນລະອຽດດັ່ງນີ້:

1 ທຸກໆ ກິດຈະການສ້ອມແປງ ພາຫະນະລົດ ທຸກປະເພດ, ໂຮງກຶງ, ໂຮງສຸ່ມ ຕ່າງໆ ຜູ້ດຳເນີນກິດຈະການດັ່ງກ່າວ ຈະຕ້ອງສະເໜີ ຂໍອະນຸຍາດ ດຳເນີນທຸລະກິດ ຈາກພະແນກ ຄຂປກ. ກຳແພງນະຄອນ

2. ສຳລັບອູ່ສ້ອມແປງພາຫະນະລົດ, ໂຮງກົງ, ໂຮງສີ່ງບຕ່າງໆ ທີ່ນອນຢູ່ໃນເຂດສະຍານກຳແພງນະຄອນວຽງຈັນ ໂດຍສະເພາະ ຢູ່ລຽບຕາມແຄມທາງ ຖະໜົນ ຫລວງພະບາງ, ຖະໜົນເສດຖາທິລາດ, ຖະໜົນສາມແສນໄທ, ຖະໜົນລ້ານຊ້າງ, ຖະໜົນໂພນເຄັງ, ຖະໜົນທ່າເດື່ອ ແຕ່ສາມແຍກ ສີເມືອງ ຫາ ສາມແຍກ ຈີ່ນາຍໂມ້ ຈະຕ້ອງເອົາໃຈໃສ່ປັບປຸງ ກ່ຽວກັບ ສະຖານທີ່ ແລະ ເຮັດອານາໄມ ໃຫ້ສະອາດສວຍງາມ ຢູ່ສະເໝີ.

3 ສຳລັບອູ່ສ້ອມແປງ ທີ່ມີສະຖານທີ່ຈຳກັດ, ນອນຢູ່ໃນເຂດຊຸມຊົນ ແອອັດ.ຫລື ຢູ່ໃກ້ກັບ ສຳນັກງານ ອົງການຕ່າງໆ ຕ້ອງໄດ້ກະກຽມຍົກຍ້າຍ ອອກໄປຕັ້ງຢູ່ບ່ອນອື່ນທີ່ເໝາະສົມ ຕາມລະບຽບຜັງເມືອງ ທີ່ໄດ້ກຳນົດໄວ້.

4 ການປຸກສ້າງ, ຕໍ່ເຕີມອາຄານ ອູ່ສ້ອມແປງ, ໂຮງກົງ, ໂຮງສີ່ງບ ຕ່າງໆ ຫລື ການຂະຫຍາຍເນື້ອທີ່ສ້ອມແປງຕ່າງໆ ຕ້ອງປະຕິບັດການ ລະບຽບ ຂອງຜັງເມືອງ ທີ່ໄດ້ກຳນົດໄວ້ ຢ່າງເຂັ້ມງວດ.

5 ທຸກໆ ການເຄື່ອນໄຫວ ຂອງກິດຈະການ ສ້ອມແປງ, ໂຮງກົງ, ໂຮງສີ່ງບ ຕ່າງໆ ຈະຕ້ອງເອົາໃຈໃສ່ ເຖິງສະພາບແວດລ້ອມອ້ອມຂ້າງ ແລະ ຕ້ອງປະຕິບັດດັ່ງນີ້

5.1 ຕ້ອງເຮັດຮົ້ວອ້ອມສະຖານທີ່ ເຄື່ອນໄຫວ ຂອງກິດຈະການ ມີຄວາມສູງ ບໍ່ຕ່ຳກວ່າ 2,50 m ຂຶ້ນໄປ ນັບຈາກພື້ນດິນ

5.2 ຕ້ອງເຮັດລະບົບລະບາຍນ້ຳເສຍ ອ້ອມຮອບ ສະຖານທີ່ ຢ່າງຮັດກຸມ

- ຫ້າມເດັດຂາດ ບໍ່ໃຫ້ຖອກນ້ຳມັນເຄື່ອງ ລົງຕາມຮ່ອງລະບາຍນ້ຳ ຫລື ຈອກນ້ຳມັນເສດເຫລືອອື່ນໆ ແບບຊະຊາຍ ທົ່ວທິບ

5.3 ສຳລັບຜູ້ເຮັດທຸລະກິດ ເຄາະຈອດ ພົ່ນສີລົດ ຈະຕ້ອງເຮັດຫ້ອງ ສຳລັບພົ່ນສີ ຢ່າງຮັດກຸມ

- ຫ້າມເດັດຂາດ ບໍ່ໃຫ້ພົ່ນສີລົດ ແບບຊະຊາຍ ຢູ່ເດີ່ນກາງແຈ້ງ

5.4 ສຳຫລັບການສ້ອມແປງ ຫລື ການທົດລອງເຄື່ອງຈັກ ທີ່ພາໃຫ້ມີສຽງດັງເຊັ່ນ ການຕີເຄາະ, ຈອດ, ການຕິດຈັກລົດ ທົດລອງ ແລະ ອື່ນໆ ຈະຕ້ອງບໍ່ເຮັດໃຫ້ ມີສຽງດັງເກີນຄວນ

- ຫ້າມເດັດຂາດ ບໍ່ໃຫ້ທົດລອງ ຕິດຈັກລົດ ໂດຍບໍ່ໃສ່ທໍ່ອາຍເສຍ ທີ່ເກັບສຽງ

6 ທຸກໆຮ້ານສ້ອມແປງ ພາຫະນະລົດ ທຸກປະເພດ ຈະຕ້ອງມີສະຖານທີ່ ສຳລັບລົດຈອດລໍຖ້າສ້ອມແປງ ຢ່າງເໝາະສົມ

- ຫ້າມເດັດຂາດ ບໍ່ໃຫ້ນຳໃຊ້ເສັ້ນທາງ, ແຄມເສັ້ນທາງຄົນຍ່າງ ເຂດສະຫງວນ ຂອງເສັ້ນທາງ ຫ່າງຈາກແຄມທາງອອກໄປ ເບື້ອງລະ 3 ແມັດ ເປັນບ່ອນຈອດລົດ ລໍຖ້າສ້ອມແປງ ຫລື ທຳການເຄື່ອນໄຫວ ສ້ອມແປງຕ່າງໆ

7 ຫ້າມເດັດຂາດ ບໍ່ໃຫ້ ບັນດາຮ້ານສ້ອມແປງ ພາຫະນະລົດ ທຸກປະເພດ ທຳການຕໍ່ເຕີມ ຫລື ດັດແປງສະພາບເຕັກນິກ ລົດ ໃຫ້ຜິດແບບ ຈາກ ມາດຖານ ເຕັກນິກ ຂອງໂຮງງານ ເຊັ່ນ: ການດັດແປງທໍ່ອາຍເສຍ ທີ່ພາໃຫ້ມີສຽງດັງ ເກີນຄວນ, ການຕໍ່ຖັງ ກະບະລົດ ໃຫ້ສູງຂຶ້ນ ຫລື ຍາວອອກ ເພື່ອບັນທຸກນ້ຳໜັກ ເພີ່ມຂຶ້ນ ເຮັດໃຫ້ທີ່ນທາງເປເພ, ຫລືທຳການປ່ຽນແປງ ຮູບລົດ ໂດຍບໍ່ໄດ້ຮັບອະນຸຍາດ ເຊິ່ງເປັນການລົບກວນສັງຄົມ ແລະ ທັງບໍ່ຮັບປະກັນ ຄວາມປອດໄພ.

8. ມອບໃຫ້ບັນດາ ຫ້ອງການ ຄຂປກ ປະຈຳແຕ່ລະເມືອງ ແລະ ຄະນະຈັດສັນ ຄວາມເປັນລະບຽບຮຽບຮ້ອຍ ສົມທົບກັບ ອຳນາດການປົກຄອງ ເມືອງ ແລະ ການຈັດຕັ້ງທີ່ກ່ຽວຂ້ອງ ກວດກາຄືນ ບັນດາຮ້ານສ້ອມແປງລົດ ທຸກປະເພດ, ໂຮງກືງ, ໂຮງສ່ຽນ ຕ່າງໆ ພ້ອມທັງກ່າວຕັກເຕືອນ ຫາກເຫັນວ່າ ຮ້ານໃດ ຍັງບໍ່ປະຕິບັດ ຕາມໃບແຈ້ງການ ສະບັບນີ້ແລ້ວ ໃຫ້ຂຶ້ນບັນຊີລາຍງານ ຂັ້ນເທິງ ເພື່ອຢຸດຕິການດຳເນີນ ທຸລະກິດ ດັ່ງກ່າວ ພາຍໃນ 1 ເດືອນ ນັບຕັ້ງແຕ່ມື້ອອກ ໃບແຈ້ງການສະບັບນີ້ເປັນຕົ້ນໄປ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທຸກພາກສ່ວນ ທີ່ກ່ຽວຂ້ອງຮັບຊາບ ແລະ ຈັດຕັ້ງປະຕິບັດ ຢ່າງເຂັ້ມງວດ.

ວຽງຈັນ, ວັນທີ [illegible] 2 SEP [illegible]5
ຫົວໜ້າພະແນກ ຄຂປກ
ປະຈຳກຳແພງ ນະຄອນວຽງຈັນ

<u>ບ່ອນສົ່ງ</u>

ກົມຂົນສົ່ງ ກະຊວງຄຈປກ " ເພື່ອລາຍງານ "
ຫ້ອງວ່າການປົກຄອງກຳແພງ " ເພື່ອລາຍງານ "
ຫ້ອງວ່າການ ປກສ ກຳແພງ " ເພື່ອລາຍງານ "
ຫ້ອງວ່າການ ປົກຄອງເມືອງ ທົ່ວກຳແພງ " ເພື່ອລາຍງານ "
ຄະນະຈັດສັນຄວາມເປັນລະບຽບ "ເພື່ອຊາບ ແລະ ໃຫ້ຄວາມຮ່ວມມື"
ຫ້ອງການ ຄຂປກ ປະຈຳແຕ່ລະເມືອງ "ເພື່ອຊາບ ແລະ ປະຕິບັດ"
ຫ້ອງການຄຸ້ມຄອງ ຂົນສົ່ງ ພະແນກ ຄຂປກ "ເພື່ອຕິດຕາມ ການປະຕິບັດ"
ບັນດາເຈົ້າຂອງກິດຈະການ ອູ່ສ້ອມແປງລົດ, ໂຮງກືງ, ໂຮງສ່ຽນ " ເພື່ອປະຕິບັດ "
ເກັບມ້ຽນສຳເນົາ 1 ສະບັບ